British Embassy
Vientiane

ສະຖານທູດອັງກິດ ປະຈຳນະຄອນຫຼວງວຽງຈັນ
ຖະໜົນ ເນຣູ
ບ້ານ ໂພນໄຊ,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)30 770 0000
BritishEmbassy.Vientiane@fco.gov.uk

# ບົດຂ່າວ

**ວັນພຸດ, ວັນທີ 29 ເມສາ 2015** **ສຳລັບການເຜີຍແຜ່ໂດຍທັນທີ**

**ການເປີດໂຕ ຮູບພາບສັນຍາລັກ (ຮູບພາບໂລໂກ) ເພື່ອສະເຫຼີມສະຫຼອງ ຄົບຮອບ 60 ປີ ຂອງ ສາຍພົວພັນດ້ານການ ທູດ ລະຫວ່າງ ສະຫະລາດຊະອານາຈັກ ອັງກິດ ແລະ ລາວ.**

**ສະຖານທູດອັງກິດ ໄດ້ປະກາດຜູ້ຊະນະເລີດໃນການແຂ່ງຂັນການແຕ້ມຮູບຂອງເດັກນ້ອຍ ເພື່ອສະເຫຼີມສະຫຼອງ ວັນຄົບຮອບສາຍພົວພັນດ້ານການທູດລະຫວ່າງ ສະຫະລາດຊະອານາຈັກ ອັງກິດ ແລະ ລາວ ຄົບຮອບ 60 ປີ.**

ມື້ນີ້ ທ່ານ ເອກອັກຄະລັດຖະທູດ ຟີລິບ ມາໂລນ ເປີດໂຕຮູບພາບທີ່ຊະນະເລີດ ຈາກການແຂ່ງຂັນການແຕ້ມຮູບຂອງເດັກນ້ອຍ ທີ່ທາງສະຖານທູດອັງກິດໄດ້ຈັດຂຶ້ນໃນເດືອນ ກຸມພາ 2015 ເພື່ອສ້າງເປັນ ຮູບພາບສັນຍາລັກ ສຳລັບ ສະເຫຼີມສະຫຼອງ ສາຍພົວພັນດ້ານການທູດລະຫວ່າງສະຫະລາດຊະອານາຈັກ ອັງກິດ ແລະ ລາວ ຄົບຮອບ 60 ປີ, ເຊິ່ງບັນຈົບຄົບຮອບໃນປີນີ້.

ຮູບແຕ້ມທີ່ເປັນແບບທີ່ຊະນະເລີດ ແມ່ນແຕ້ມໂດຍ ເດັກອາຍຸ 15 ປີ ຄື ເກດສະໜາ ວົງພະຕາ ເຊິ່ງຄັດເລືອກມາຈາກພາບທີ່ສົ່ງເຂົ້າປະກວດ ທັງໝົດ 100 ພາບ ທີ່ທາງສະຖານທູດອັງກິດໄດ້ຮັບ ຈາກເດັກນັກຮຽນທົ່ວປະເທດລາວ. ຮູບພາບນີ້ ຖືກຄັດເລືອກ ຍ້ອນວ່າມັນສະແດງໃຫ້ເຫັນເຖິງ ຫຼາຍໆອົງປະກອບທີ່ສຳຄັນ ຂອງ ສະຫະລາດຊະອານາຈັກ ອັງກິດ ແລະ ລາວ ລວມທັງ ສິ່ງທີ່ເປັນເຄື່ອງໝາຍ ສັນຍາລັກເຊັ່ນ ຫໍໂມງໃຫຍ່ ບິກເບັນ ແລະພະທາດຫຼວງ ເຊັ່ນດຽວກັນກັບ ທຸງຊາດຂອງສະຫະລາດຊະອານາຈັກ ແລະ ທຸງຊາດລາວ.

ຜູ້ຊະນະເລີດ ຄື: ເກດສະໜາ ວົງພະຕາ, ເດັກນັກຮຽນ ຈາກໂຮງຮຽນມັດທະຍົມສົມບູນວຽງຈັນ, ໂດຍມີ ຜູ້ເຂົ້າຮອບຊິງລາງວັນຜູ້ອື່ນໆ, ໄດ້ເຂົ້າຮ່ວມພິທີມອບລາງວັນ ທີ່ຈັດຂຶ້ນທີ່ເຮືອນພັກຂອງທ່ານເອກອັກຄະລາຊະທູດອັງກິດ ໃນວັນ ພຸດ ວັນທີ 29 ເມສາ 2015 ໃນການເປີດໂຕ ຮູບພາບສັນຍາລັກໃໝ່ ຂອງ ການສະເຫຼີມສະຫຼອງວັນຄົບຮອບດັ່ງກ່າວ. ຮູບພາບສັນຍາລັກ ຈະໄດ້ນຳໃຊ້ໄປຕະຫຼອດ ປີ 2015 ເພື່ອເປັນເຄື່ອງໝາຍສັນຍາລັກຂອງ

ບັນດາກິດຈະກຳ ສະເຫຼີມສະຫຼອງວັນຄົບຮອບ 60 ປີ ໃນສະຖານທູດອັງກິດ. ແຂກພິເສດຂອງງານດັ່ງກ່າວ ລວມເຖິງ ທ່ານຫົວໜ້າກົມ ເອີຣົບ-ອາເມລິກາ, ກະຊວງການຕ່າງປະເທດ, ພະນະທ່ານ ເອກອັກຄະລັດຖະທູດ ທ່ານ ຂວັນຕາ ຜາລິວົງ.

ໃນລະຫວ່າງງານດັ່ງກ່າວ, ທ່ານເອກອັກຄະລາຊະທູດ ທ່ານ ຟີລິບ ມາໂລນ ໄດ້ກ່າວວ່າ:

"ພວກເຮົາປະທັບໃຈຫຼາຍ ກັບຄຸນນະພາບຂອງຮູບພາບແຕ້ມ ແລະ ຄວາມຄິດສ້າງສັນ ທີ່ສະແດງອອກໂດຍ ຜູ້ທີ່ແຕ້ມຮູບພາບສົ່ງເຂົ້າປະກວດທັງໝົດ. ຄະນະກຳມະການຕັດສິນ ກໍ່ຕັດສິນໃຈຍາກຫຼາຍ ໃນການທີ່ຈະເລືອກເອົາພາບໃດເປັນພາບຊະນະເລີດ, ແນວໃດກໍ່ຕາມ ພວກເຮົາກໍ່ ປະທັບໃຈຫຼາຍກັບພາບການອອກແບບທີ່ໄດ້ຊະນະເລີດຂອງ ເກດສະໜາ ແລະ ພວກເຮົາກໍ່ຫວັງເປັນຢ່າງຍິ່ງ ທີ່ຈະນຳໃຊ້ເປັນຮູບພາບສັນຍາລັກຂອງວັນຄົບຮອບຕະຫຼອດປີ 2015 ນີ້."

ສະຫະລາດຊະອານາຈັກ ອັງກິດ ແລະ ລາວ ໄດ້ເລີ່ມສ້າງສາຍພົວພັນດ້ານການທູດທຳອິດ ແມ່ນໃນວັນທີ 5 ກັນຍາ 1955. ສາຍພົວພັນດ້ານການທູດ ໄດ້ຮັບການຟື້ນກັບຂຶ້ນມາໃໝ່ ໃນເດືອນ ພະຈິກ 2012 ໂດຍມີການເປີດສະຖານທູດອັງກິດ ປະຈຳ ນະຄອນຫຼວງວຽງຈັນ ຄືນໃໝ່ ພາຍຫຼັງທີ່ຂາດໄປເປັນໄລຍະເວລາ 27 ປີ, ແລະ ໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງຂຶ້ນຕື່ມ ດ້ວຍການເປີດສະຖານທູດ ສປປ ລາວ ປະຈຳ ກຸງ ລອນດອນ ໃນທ້າຍປີກາຍ.

**ຕິດຕໍ່:**
**ເທຣຊີ ບຣຸກຊໍ (**Tracy Brookshaw) **ເຈົ້າໜ້າທີ່ດ້ານການສື່ສານ ແລະ ນະໂຍບາຍ**
ສະຖານທູດອັງກິດ ປະຈຳ ນະຄອນຫຼວງວຽງຈັນ. ອີເມວ: tracy.brookshaw@fco.gov.uk ໂທລະສັບ:
020 9554 0271